# FORCOM NEWS LETTER

ສະບັບທີ 14 (ປະຈຳເດືອນ 3 ປີ 2006)

## ໂຄງການຄຸ້ມຄອງປ່າໄມ້ ແລະ ສົ່ງເສີມຊາວບ້ານ (ຟໍຄອມ)

## Forest Management and Community Support Project (FORCOM)

### ສາລະບານ


- ຄຳນຳຂອງວາລະສານຂ່າວ
- ຂ່າວສົດຈາກ ໂຄງການ
- <ພິເສດ>ວິທີດຳເນີນການປະເມີນຜົນເຄິ່ງໄລຍະ
- ລາຍງານສົດ
- ເລົ່າເລື່ອງ ເຄື່ອງປ່າຂອງດົງ NTFP ຢູ່ລາວ
- ເວົ້າສູ່ກັນຟັງ
- ວຽກງານຕົ້ນຕໍ




「 ການເຮັດເຂົ້າໜົມແລະໂຄງການ」 **ໂດຍ: ທ່ານ ຊາກຸໂດະ**, ພະນັກງານຫ້ອງການ ອົງການໄຈກາປະຈຳ ສ ປ ປ ລາວ

ລາຍການໂທລະພາບທີ່ເຄີຍໄດ້ເບິ່ງ ນັກປະຕິເຊ(ຄົນເຮັດເຂົ້າຫນົມ)ຜູ້ໜຶ່ງໄດ້ເວົ້າວ່າ: ໃນການເຮັດເຄັກຂອງຂ້ອຍບໍ່ມີເຄັດລັບຫຍັງພິເສດ, ພຽງແຕ່ຂ້ອຍເອົາໃຈໃສ່ຕໍ່ລາຍລະອຽດປີກຍ່ອຍ ແມ່ນແຕ່ສ່ວນນ້ອຍກໍ່ຕາມ ແລະກໍ່ບໍ່ໄດ້ຖືເບົາ, ທຸກຢ່າງແມ່ນເຮັດດ້ວຍຈິດສຳນຶກຂອງມືອາຊີບ. ດ້ວຍເຫດອັນນີ້ ຈຶ່ງເກີດມີເຄັກທີ່ດີ ທີ່ບໍ່ເຄີຍມີຢູ່ບ່ອນໃດມາກ່ອນ.

ເມື່ອເວົ້າເຖິງຂໍ້ດີຂອງ FORCOM ແລະ ຈຸດມຸ້ງໝາຍຂອງມັນ, ເຮົາສາມາດເວົ້າຄືກັບຄຳເວົ້າຂອງ ປະຕິເຊນັ້ນເອງ. ຜ່ານມາຢູ່ໃນລາວ ກໍ່ໄດ້ມີການລອງເຮັດການພັດທະນາຊຸມຊົນຫຼາຍໆຮູບແບບ, ຢູ່ໂຄງການໃດກໍ່ມີກິດຈະກຳທີ່ບໍ່ຄ່ອຍແຕກຕ່າງກັນເລີຍ. ກິດຈະກຳຕົ້ນຕໍທີ່ເຮັດຢູ່ພາຍໃນບ້ານແມ່ນການລ້ຽງໝູ ຫຼື ງົວໂດຍໃຊ້ລະບົບໝູນວຽນ,ແລະນຳໃຊ້ກິດຈະກຳການຜະລິດກະສິກຳອື່ນໆເປັນຕົ້ນຕໍເຂົ້າໃນການສົ່ງເສີມການຜະລິດຂອງຊາວບ້ານ,ບໍ່ວ່າຈະນຳໃຊ້ລະບົບໝູນວຽນ ຫຼື ວ່າການສົ່ງເສີມກິດຈະ ກຳການຜະລິດທີ່ພວມດຳເນີນຢູ່ ກໍ່ບໍ່ໄດ້ແມ່ນກິດຈະກຳທີ່ໃໝ່ຫຍັງເລີຍ. ຄັນຊັ້ນໂຄງການຟໍຄອມ (FORCOM) ແຕກຕ່າງກັບໂຄງການອື່ນແນວໃດ?

ດັ່ງຕົວຢ່າງທີ່ໄດ້ກ່າວມາຂ້າງເທິງ, ເຖິງຈະເວົ້າວ່າ ເຮັດເຄັກຄືກັນກໍ່ຕາມ, ແຕ່ວິທີປັ້ນ(ສູດເຮັດເຂົ້າໜົມ) ແລະການເອົາໃຈໃສ່ລາຍລະອຽດຂອງແຕ່ລະບ່ອນແມ່ນແຕກຕ່າງກັນ. ໃນລະບົບໝູນວຽນຂອງແຜນງານສົ່ງເສີມຊາວບ້ານ (CSP) ຊຶ່ງແມ່ນບັນຫາແກນກາງຂອງການຈັດຕັ້ງປະຕິບັດກິດຈະກຳຂອງ ຟໍຄອມ FORCOM ແມ່ນມີຄວາມຍືດຢຸ່ນສາມາດປັບເຂົ້າກັບສະພາບຂອງແຕ່ລະໝູ່ບ້ານໄດ້ເປັນຢ່າງດີ, ເປັນລະບົບທີ່ຕ້ອງຕັ້ງໃຈເຮັດຢ່າງຄັກແນ່ ຮັດກຸມແຕ່ກໍ່ບໍ່ໄດ້ສະຫຼັບສັບຊ້ອນຈົນເກີນໄປ. ອາດເວົ້າໄດ້ວ່າ ເປັນລະບົບທີ່ດີເລີດແລະເໝາະສົມທີ່ສຸດ. ຊ່ຽວຊານຍີ່ປຸ່ນ ແລະ ທີມງານຜູ້ຮ່ວມງານຝ່າຍລາວທີ່ໄດ້ຝຶກອົບຮົມແບບທັງຮຽນທັງເຮັດ(OJT)ມາຢ່າງເຂັ້ມຂຸ້ນ ຫລາຍກ່ວາໂຄງການອື່ນນັ້ນໄດ້ລົງໄປຕິດແທດກັບຕົວຈິງກັບຊາວບ້ານຊຶ່ງໄດ້ກາຍມາເປັນພື້ນຖານໃນການສ້າງລະບົບທີ່ກ່າວມາຂ້າງເທິງນີ້ຂື້ນໃນແຕ່ລະບ້ານ.ເວົ້າວ່າພັດທະນາຊຸມຊົນແມ່ນຄືກັນ ກໍ່ຈິງຢູ່, ແຕ່ແຜນງານສົ່ງເສີມຊາວບ້ານ(CSP) ທີ່ຖືກສ້າງຂຶ້ນຢ່າງປານີດບັນຈົງແລະລະອຽດອ່ອນຈະກາຍເປັນໂຄງຮ່າງອັນທີ່ໝັ້ນຄົງແຂງແກ່ນ, ອັນນີ້ ມັນກໍ່ພາໃຫ້ເກີດມີຜົນປະໂຫຍດຫຼາຍແກ່ບ້ານຕ່າງໆ ເຊິ່ງໝາກຜົນທີ່ໄດ້ຮັບນັ້ນ ແນ່ນອນວ່າ ຈະບໍ່ດ້ອຍໄປກ່ວາໂຄງການອື່ນເລີຍ. ຄືກັບຄຳວ່າ: ຖ້າຫາກວ່າບໍ່ບົກຜ່ອງໃນສິ່ງທີ່ນ້ອຍໆກໍ່ຈະເຮັດໃຫ້ເກີດໝາກຜົນອັນມະຫາສານ ຕາມມາພາຍຫຼັງ. ນັກປາຕິເຊ ຍັງເວົ້າອີກວ່າ: ຖ້າຫາກລັງເລໃນການເຮັດເຄັກໃດໜຶ່ງ ໃຫ້ເລືອກທາງແກ້ທີ່ທີ່ສຸດທີ່ຄິດອອກມາໄດ້ ແລະ ການປະເຊີນກັບຄວາມຫຍຸ້ງນັ້ນ ຈະພາໃຫ້ສິ່ງໃໝ່ໆເກີດຂຶ້ນມາ. ຈາກນີ້ໄປ ແມ່ນເຄິ່ງຫຼັງຂອງໄລຍະໂຄງການ ຂໍໃຫ້ຜູ້ກ່ຽວຂ້ອງທັງຝ່າຍລາວ ແລະ ຍີ່ປຸ່ນ ຈົ່ງຕັ້ງໃຈປະເຊີນກັບສິ່ງທ້າທາຍຕໍ່ໄປອີກ ຊຶ່ງມັນຈະເຮັດໃຫ້ໂຄງການ (FORCOM) ເກີດມີໝາກຜົນຫຼາຍຍິ່ງຂຶ້ນໄປ.

## ຂ່າວສົດໆຮ້ອນໆ

### < ການເປີດຊຸດອົບຮົມການຄຸ້ມຄອງບໍລິຫານການລ້ຽງສັດແລະການຕິດຕາມກວດກາ >

ໃນວັນທີ 27 ຫາ 29 ມີນາ 2006 ນີ້ ໄດ້ມີການຈັດຝຶກອົບຮົມ ກ່ຽວກັບວິທີຄຸ້ມຄອງ ການລ້ຽງສັດ ໃນທັດສະນະຂອງການບໍລິຫານຈັດການ ແລະ ການຕິດຕາມກວດກາ ໃຫ້ແກ່ ພະນັກງານສົ່ງເສີມກະສິກຳ ແລະ ປ່າໄມ້ທີ່ຮັບຜິດຊອບ ຢູ່ບັນດາຈຸດເລີ້ມຕົ້ນ(ຈລຕ) ຂອງໂຄງການ. ທີມຈັດຕັ້ງປະຕິບັດຂອງແຂວງຫຼວງພະບາງ ແລະແຂວງໄຊຍະບູລີ ຊຶ່ງປະກອບດ້ວຍ ສະມສຊິກ 13 ຄົນ ຍິງ 3 ຄົນ) ແລະ ພ/ງໂຄງການ 9 ຄົນ ລວມທັງມົດເປັນ 22 ຄົນ ເຂົ້າຮ່ວມຊຸດຝຶກອົບຮົມດັ່ງກ່າວ.



ການລ້ຽງໝູພັນປະສົມ (ພັນພື້ນເມືອງແລະພັນລູ້ມ) ຢູ່ບ້ານປ່ງຄົງ



ການຟັງບັນຍາຍ ຢູ່ຫ້ອງປະຊຸມຂອງໂຄງການ

ຈຸດປະສົງຂອງການຝຶກອົບຮົມ ມີຄື: ①ຍົກລະດັບຄວາມຮູ້ກ່ຽວກັບ ການລ້ຽງສັດຢ່າງມີປະສິດທິພາບ ແລະ ວິທີການຄຸ້ມຄອງການລ້ຽງສັດຕ່າງໆ ໃຫ້ແກ່ ພ/ງສົ່ງເສີມຂັ້ນເມືອງ, ② ປັບປຸງແບບຟອມ ການຕິດຕາມກວດກາ ທີ່ ໂຄງການສ້າງຂຶ້ນ ແລະ ເຜີຍແຜ່ແບບແຜນການຕິດຕາມກວດກາຄືນໃໝ່. ນອກນີ້ ຍັງໄດ້ແນະນຳຮູບແບບການສົ່ງເສີມກະສິກຳຢູ່ລາວ ໂດຍສະເພາະ ແມ່ນການຍົກລະດັບສະຕິໃນການເສີມສ້າງລະບົບການສົ່ງເສີມ ຢູ່ ຂັ້ນບ້ານ.

ຂັ້ນຕອນໃນການດຳເນີນການຕິດຕາມກວດກາໃນຕໍ່ຫນ້ານີ້ ຈະບໍ່ແມ່ນໂຄງການເປັນຜູ້ເຮັດຕົ້ນຕໍ. ພວກເຮົາເລັ່ງໃສ່ເສີມສ້າງຄວາມສາມາດຂອງຊາວບ້ານ ເພື່ອໃຫ້ເຂົາເຈົ້າດຳເນີນການຕິດຕາມກວດກາດ້ວຍຕົນເອງ. ໃນນີ້ ໄດ້ມອບໃຫ້ທີມງານພັດທະນາຊຸມຊົນເປັນຜູ້ຮັບຜິດຊອບສ້າງຮ່າງແບບຟອມ ແລະ ແນະນຳວິທີນຳໃຊ້ພ້ອມທັງກວດສອບຄວາມເໝາະສົມ. ຜົນຂອງການປະເມີນຜົນຕົນເອງກ່ຽວກັບຄວາມເຂົ້າໃຈຕໍ່ເນື້ອໃນ ທີ່ໄດ້ອົບຮົມມາ, ທັງການບໍລິຫານການຄຸ້ມຄອງການລ້ຽງສັດ ແລະຮູບແບບການສົ່ງເສີມກະສິກຳຂອງລາວ ກໍສາມາດຕີລາຄາໄດ້ວ່າ ຜູ້ເຂົ້າຮ່ວມມີຄວາມເຂົ້າໃຈດີ. ແຕ່ແນວໃດກໍ່ຕາມໃນຊຸດຝຶກອົບຮົມຕໍ່ໆໄປພວກເຮົາຈະພະຍາຍາມເຮັດໃຫ້ຊຸດຝຶກອົບຮົມເປັນອັນເຂົ້າໃຈນັບມື້ນັບງ່າຍຂຶ້ນ.

### < ການມາເກັບກຳສະພາບການເຄື່ອນໄຫວຂອງໂຄງການຟໍຄອມ ໂດຍລາຍການໂທລະພາບໂຄສະນາ ODA ຂອງຍີ່ປຸ່ນ >

ໃນວັນທີ 21 ມີນາ ຜ່ານມານີ້, ໄດ້ມີຄະນະຖ່າຍທຳລາຍການໂທລະພາບເພື່ອໂຄສະນາ ODA ຂອງຍີ່ປຸ່ນ ມາສຳພາດແລະເກັບກຳຂໍ້ມູນສະພາບການເຄື່ອນໄຫວຂອງໂຄງການຟໍຄອມ ໃນຄະນະດັ່ງກ່າວ, ໄດ້ຍິນມາວ່າ ເຊກິຕຸຈິ ໂຕໂມຮິໂຮະ, ອາຍຸ 34 ປີ(ລູກຊາຍຂອງ ເຊກິຕຸຈິ ຮິໂຣະຊິ, ນັກຈັດລາຍການຜູ້ມີຊື່ສຽງ) ກໍ່ມານຳ, ເຄີຍເຫັນແຕ່ໃນໂທລະພາບ ບັດນີ້ຈະໄດ້ເຫັນຕົວຈິງ ຈຶ່ງຕື່ນເຕັ້ນຫຼາຍ. ບ່ອນຖ່າຍຟິມຂ່າວ ແມ່ນ ຈຸດໜຶ່ງຂອງພື້ນທີ່ໂຄງການຟໍຄອມ ຄື ບ້ານຫາດຮວາຍ, ເມືອງປາກແຊງ, ແຂວງຫຼວງພະບາງ. ການຖ່າຍທຳໃຊ້ເວລາໝົດມື້ຂອງມື້ ທີ່ຮ້ອນອົບເອົ້າ ໂດຍເລີ່ມຈາກການຍ່າງເບິ່ງບ້ານດັ່ງກ່າວ ເພື່ອເບິ່ງຊີວິດການເປັນຢູ່ຂອງຊາວບ້ານ ແລະການພົບປະກັບເດັກນ້ອຍຂອງທ່ານ ເຊກິຕຸຈິ. ຕໍ່ມາແມ່ນພາບການປະຊຸມຂອງຊາວບ້ານ, ການລ້ຽງໝູ,ລ້ຽງປາ ແລະສວນປູກໄມ້ໃຫ້ໝາກຂອງກຸ່ມກິດຈະກຳພາຍໃນບ້ານ. ພາເຂົ້າທ່ຽງ ແມ່ນຊາວບ້ານເປັນຜູ້ແຕງໃຫ້ ແລະຍັງມີເຫຼົ້າຂາວແຮງ 0 ອົງສາ ທີ່ຊາວບ້ານເອົາມາຕ້ອນຮັບ ໃຫ້ລອງດື່ມ. ສຳລັບທ່ານ ເຊກິຕຸຈິ ທີ່ດື່ມເຫຼົ້າບໍ່ໄດ້ນັ້ນ ມັນຄືຊິໄໝ້ຄໍເພີ່ນ ຈັ່ງຊັ້ນແຫລະ! ໃນລະຫວ່າງການຖ່າຍທຳ ທົວໜ້າ ອິວາສະ ກໍ່ສະແດງຄວາມ "ກ້າຫານ" ໄປໂອ້ລົມກັບ ທ່ານ ເຊກິຕຸຈິ ກ່ຽວກັບເລື່ອງການເຮັດໄຮ່。 ທ່ານ ເຊກິຕຸຈິ ມີຄວາມສົນໃຈຫຼາຍ ເພາະໃນສະໄໝ ໂຈມົນ (1000- 3000 ປີ ກ່ອນ ຄ.ສ) ຢູ່ຍີ່ປຸ່ນ ກໍ່ມີການເຮັດໄຮ່ ມາແລ້ວ. ເມື່ອເຫັນເຮືອນຍົກພື້ນມຸງຫຍ້າຂອງຊາວບ້ານຫາດຮວາຍ ກໍ່ຄ້າຍຄືກັນກັບເຂົ້າອຸໂມງ ຍ້ອນເວລາກັບຄືນໄປຫາສະໄໝໂຈມົນ ແລະ ມີຄວາມດີອົກດີໃຈຫຼາຍ. ນອກນີ້ ຍັງມີຫຍ້າຍຸບ ທີ່ຢູ່ ເມືອງຍີ່ປຸ່ນ ບໍ່ຄ່ອຍໄດ້ພົບເຫັນຢູ່ແຄມທາງ ເປັນເວລາ 20 ປີແລ້ວ. ດັ່ງນັ້ນລາວຈຶ່ງລູບຄຳຫຍ້າດັ່ງກ່າວ ຫລິ້ນຄືກັນກັບເດັກນ້ອຍ.

ລາຍການໄດ້ອອກອາກາດ ໃນຄືນວັນທີ 14ເດືອນ 4 ຢູ່ໃນເຄືອສະຖານີໂທລະພາບໂຕກຽວ ເປັນເວລາປະມານ 5 ນາທີ ບັນດາທ່ານ ກະໄດເບິ່ງຢູ່ບໍ?. ເປັນການເບິ່ງມຸມໜຶ່ງຂອງ ການເຄື່ອນໄຫວຂອງ ໂຄງການຟໍຄອມ ຢູ່ພື້ນທີເປົ້າໝາຍທີ່ຢູ່ໃນຄວາມຮັບຜິດຊອບຂອງຊ່ຽວຊານ ນາງ ອິຊິບາຊິ. "ຕົວເອກ" ຄືຊິແມ່ນ ນາງ ອິຊິບາຊິ ສ່ວນຜົນການຖ່າຍທຳຈະເປັນແນວໃດນັ້ນ ກໍ່ຂຶ້ນກັບຜູ້ກ່ຽວ ແລະ ທ່ານ ເຊກິຕຸຈິ ທີ່ອົດທົນດຳເນີນການຖ່າຍທຳ ບໍ່ວ່າອາກາດຈະຮ້ອນປານໃດກໍ່ຕາມ. ຂໍຂອບໃຈຫລາຍໆ.



ພາບການສຳພາດຊາວບ້ານ

ໜຶ່ງໃນກິດຈະກຳຕົ້ນຕໍຂອງໂຄງການຄຸ້ມຄອງປ່າໄມ້ແລະສົ່ງເສີມຊາວບ້ານ (FORCOM) ແມ່ນ ການລົບລ້າງລະດັບຄວາມເພິ່ງພານຳການຖາງປ່າເຮັດໄຮ່ ຊຶ່ງເປັນສາຍເຫດຕົ້ນຕໍຂອງການທຳລາຍປ່າໄມ້, ໂດຍການຊ່ວຍເຫຼືອສະໜັບສະໜູນຊາວບ້ານຫັນມາເຮັດການຜະລິດຄົງທີ່ທົດແທນ. ດ້ວຍການຊ່ວຍເຫຼືອໃນການຫັນປ່ຽນອາຊີບທີ່ເຮັດໃຫ້ຊາວໄຮ່ມີລາຍໄດ້ເພີ້ມຂຶ້ນ ມັນຈະເປັນປັດໃຈໃນການຄ້ຳປະກັນຊີວິດການເປັນຢູ່ຂອງເຂົາເຈົ້າ ກໍ່ຄື ຈະເຮັດໃຫ້ເນື້ອທີ່ໄຮ່ຫລຸດໜ້ອຍລົງຊຶ່ງແມ່ນເປົ້າໝາຍຂອງການຊ່ວຍເຫຼືອຈາກໂຄງການ. ເພື່ອກວດສອບເບິ່ງຜົນໄດ້ຮັບຕົວຈິງ ທາງໂຄງການໄດ້ດຳເນີນການສຳຫຼວດລາຍຮັບ-ລາຍຈ່າຍຂອງຄອບຄົວຊາວກະສິກອນ ໃນບ້ານເປົ້າໝາຍຂອງໂຄງການ. ພວກເຮົາໄດ້ວິເຄາະຜົນຂອງການສຳຫຼວດໃນ 4 ບ້ານ ຈຸດເລີ້ມຕົ້ນ ຢ່າງລວມໆ ແລະ ຂໍລາຍງານຜົນຂອງການວິເຄາະດັ່ງລຸ່ມນີ້.

## 1. ວິທີສຳຫຼວດ

### 1.1 ຈຸດປະສົງຂອງການສຳຫຼວດ

ເປັນສ່ວນໜຶ່ງໃນດັດສະນີວັດແທກ(ຕົວຊີ້ບອກ)ລະດັບຄວາມຄືບໜ້າຂອງຜົນໄດ້ຮັບຂອງໂຄງການ ຊຶ່ງລວມມີ ① ລາຍໄດ້ເພີ່ມຂຶ້ນ, ② ລະດັບການເພິ່ງພາການຖາງປ່າເຮັດໄຮ່ ຫຼຸດລົງ. ເພື່ອວິເຄາະຄວາມຄືບໜ້າຂອງການຈັດຕັ້ງປະຕິ ບັດໂຄງການ ຊຶ່ງເລີ່ມແຕ່ ປີ 2004 ເປັນຕົ້ນມາ ຢູ່ບ້ານຈຳນວນໜຶ່ງ ໃນເຂດພື້ນທີ່ຂອງໂຄງການ ຈຶ່ງໄດ້ໃຫ້ມີການສຳຫຼວດປີລະເທື່ອ ຕະຫຼອດໄລຍະດຳເນີນໂຄງການ.

### 1.2 ຂອບເຂດຂອງການສຳຫຼວດ

ການສຳຫຼວດຄັ້ງທີ 1 (ເດືອນ 12 ປີ 2004) ໄດ້ດຳເນີນຢູ່ 4 ບ້ານຈຸດເລີ້ມຕົ້ນ, ລວມມີ 269 ຄົວເຮືອນ, ຄັ້ງທີ 2 (ເດືອນ 12 ປີ 2005) ສຳຫຼວດຢູ່ 4 ບ້ານຈຸດເລີ້ມຕົ້ນ, ລວມມີ 269 ຄົວເຮືອນ ແລະ 4 ບ້ານຈຸດທົດລອງ ຊຶ່ງລວມມີ 245. ຄົວເຮືອນ ລວມເປົ້າໝາຍທັງໝົດຂອງການສຳຫຼວດຄັ້ງທີ່ 2 ມີ 514 ຄົວເຮືອນ. ໂດຍພື້ນຖານແລ້ວ, ຈຳນວນ 514 ຄົວເຮືອນນີ້ ຈະເປັນຄົວເຮືອນສຳລັບການສຳຫຼວດຄົງທີ່ໃນຄັ້ງຕໍ່ໆໄປ.ລາຍລະອຽດຂອງແຕ່ລະບ້ານມີດັ່ງສະແດງໄວ້ໃນຕາຕະລາງ 1 ລຸ່ມນີ້.

**ບ້ານແລະຄົວເຮືອນ (ຫລັງຄາເຮືອນ)ເປົ້າໝາຍຂອງການສຳຫຼວດ ລາຍຮັບ-ລາຍຈ່າຍ ຂອງຄອບຄົວ**

| | ແຂວງ | ເມືອງ | ບ້ານ | ຈຳນວນຄອບຄົວຜູ້ເຂົ້າຮ່ວມ | ຈຳນວນຄອບຄົວຜູ້ບໍ່ທັນໄດ້ເຂົ້າຮ່ວມ |
|---|---|---|---|---|---|
| ບ້ານຈຸດເລີ່ມຕົ້ນ | ຫຼວງພະບາງ | ປາກແຊງ | ຫາດຮວາຍ | 53 | 30 |
| | | ວຽງຄຳ | ສາມຕົ້ນ | 21 | 30 |
| | | ນານ | ປິ່ງດົງ | 31 | 30 |
| | ໄຊຍະບູລີ | ໄຊຍະບູລີ | ນາມອນ | 44 | 30 |
| | | | ລວມ | 149 | 120 |
| ບ້ານຈຸດທົດລອງ | ບໍ່ແກ້ວ | ຜາອຸດົມ | ປາງທອງ | 43 | 20 |
| | ຫຼວງນ້ຳທາ | ລອງ | ປ່າຂ່າ | 39 | 19 |
| | ຫົວພັນ | ວຽງທອງ | ນ້ຳສາດ | 31 | 14 |
| | ວຽງຈັນ | ເຟືອງ | ໂພນທອນ | 52 | 27 |
| | | | ລວມ | 165 | 80 |
| | | | ລວມທັງມົດ | 314 | 200 |

### 1.3 ວິທີ ແລະ ເນື້ອໃນສຳຫຼວດ

ສ້າງຕາຕະລາງສອບຖາມແລ້ວ ລົງມືສຳຫຼວດໂດຍການສອບຖາມແຕ່ລະຄົວເຮືອນ. ຕາຕະລາງສອບຖາມປະກອບມີ 3 ຫົວຂໍ້ໃຫຍ່ ຄື ① ຂໍ້ມູນພື້ນຖານດ້ານເສດຖະກິດ-ສັງຄົມ (ໂຄງສ້າງຄອບຄົວແລະອື່ນໆ 4 ຫົວຂໍ້ຍ່ອຍ), ② ລາຍ ຮັບ (ການຂາຍຜະລິດຕະພັນກະສິກຳແລະອື່ນໆ 17 ຫົວຂໍ້ຍ່ອຍ), ③ ລາຍຈ່າຍ (ອາຫານແລະອື່ນໆ 17 ຫົວຂໍ້ຍ່ອຍ).

## 2. ຜົນການສຳຫຼວດໂດຍສັງເຂບ

### 2.1 ລາຍຮັບ ແລະ ລາຍຈ່າຍສະເລ່ຍຕໍ່ປີ ຢູ່ 4 ບ້ານຈຸດເລີ້ມຕົ້ນຂອງໂຄງການ

#### 2.1.1 ລາຍຮັບ

ໃນປີ 2004 ຢູ່ 4 ບ້ານຈຸດເລີ້ມຕົ້ນ, ມີລາຍຮັບສະເລ່ຍຕໍ່ປີ ແຕ່ 4,4 ລ້ານກີບ (ບ້ານປິ່ງດົງ, ແຂວງຫຼວງພະບາງ) ຫາ 6,6 ລ້ານກີບ (ບ້ານນາມອນ, ແຂວງໄຊຍະບູລີ) ຊຶ່ງມີການຫຼຸດໂຕນກັນຫຼາຍສົມຄວນ (ຮູບ1.).

ຕາຕະລາງ 2. ລາຍໄດ້ສະເລ່ຍຕໍ່ປີ ຂອງ 4 ບ້ານຈຸດເລີ້ມຕົ້ນ ທຽບໃສ່ ປີ 2004/2005
(ຫົວໜ່ວຍ : ພັນກີບ)

| ແຂວງ | ເມືອງ | ບ້ານ | ປີ 2004 | ປີ 2005 |
|---|---|---|---|---|
| ຫຼວງພະບາງ | ປາກແຊງ | ຫາດຮວາຍ | 4,330.9 | 4,588.1 |
| | ວຽງຄຳ | ສາມຕົ້ນ | 4,679.8 | 5,167.9 |
| | ນານ | ປິ່ງດົງ | 6,743.6 | 4,435.0 |
| ໄຊຍະບູລີ | ໄຊຍະບູລີ | ນາມອນ | 6,105.8 | 6,143.8 |
| ສະເລ່ງໃນ 4 ບ້ານຈຸດເລີ້ມຕົ້ນ | | | 5,436.5 | 5,091.3 |

ເມື່ອທຽບໃສ່ປີ 2004, ລາຍຮັບສະເລ່ງຕໍ່ປີໃນ 3 ບ້ານ ຈະເຫັນວ່າເພີ່ມຂຶ້ນໜ້ອຍໜຶ່ງ, ຢູ່ບ້ານປິ່ງດົງແມ່ນຫຼຸດລົງຫຼາຍ. ການທີ່ລາຍຮັບຢູ່ບ້ານປິ່ດົງຫຼຸດລົງນັ້ນ ຍ້ອນໃນ ເດືອນ 7-8 ປີ 2005 ໄດ້ເກີດແຫ້ງແລ້ງ ເຮັດໃຫ້ຜົນເກັບກ່ຽວຜົນຜະລິດກະສິກຳ ລວມທັງເຂົ້າກໍ່ຫຼຸດລົງ. (ໝາຍເຫດ: 1 ລ້ານກີບ ເທົ່າກັບ ປະມານ 1 ໝື່ນເຢັນ).

#### 2.1.2 ລາຍຈ່າຍ

ໃນ ປີ 2004 ຢູ່ 4 ບ້ານຈຸດເລີ້ມຕົ້ນ, ມີລາຍຈ່າຍສະເລ່ງຕໍ່ປີ ແຕ່ 4,9 ລ້ານ ລາຍຈ່າຍສະເລ່ຍປີແມ່ນ 4,9 ລ້ານກີບ (ບ້ານປິ່ງດົງແຂວງຫຼວງພະບາງ) ຫາ 7,8 ລ້ານກີບ(ບ້ານນາມອນແຂວງໄຊຍະບູລີ) ຊຶ່ງຫຼຸດໂຕນກັນສົມຄວນ (ຮູບ2.).



ເມື່ອທຽບໃສ່ປີ 2004, ລາຍຈ່າຍສະເລ່ຍຕໍ່ປີໃນ 3 ບ້ານ (ຍົກເວັ້ນ ບ້ານປິ່ງດົງ)ເຫັນວ່າຫຼຸດລົງໜ້ອຍໜຶ່ງ. ຕາມຂໍ້ມູນທີ່ມີຢູ່ເຫັນວ່າທັງ 4 ບ້ານ ຖືກຜົນກະທົບຈາກໄພແຫ້ງແລ້ງໃນປີ 2005, ອັນໄດ້ເຮັດໃຫ້ຜົນເກັບກ່ຽວດ້ານກະສິກຳຫຼຸດລົງ, ສິ່ງຜົນໃຫ້ຄ່າໃຊ້ຈ່າຍໃນການຊື້ສະບຽງອາຫານເພີ່ມຂຶ້ນ.

ຮູບ1 ລາຍຮັບສະເລ່ງຕໍ່ປີ ຂອງ 4 ບ້ານຈຸດເລີ້ມຕົ້ນຂອງໂຄງການ
(ຫົວໜ່ວຍ: ພັນກີບ)




ຮູບ2. ລາຍຈ່າຍສະເລ່ງຕໍ່ປີ ຂອງ 4 ບ້ານຈຸດເລີ້ມຕົ້ນຂອງໂຄງການ




## 3 . ລາຍຮັບຂອງຊາວກະສິກອນຜູ້ເຂົ້າຮ່ວມໂຄງການແລະບໍ່ເຂົ້າຮ່ວມ ໃນ 4 ບ້ານຈຸດເລີ້ມຕົ້ນ ຂອງໂຄງການ

### 3.1 ການປຽບທຽບ(ການເພີ່ມ ຫຼື ຫຼຸດ) ລາຍຮັບຂອງຊາວກະສິກອນຜູ້ເຂົ້າຮ່ວມ ແລະ ບໍ່ຜູ້ບໍ່ເຂົ້າຮວມໂຄງການໃນປີ 2004/2005

ຮູບ3, 4 ສະແດງເຖິງລາຍຮັບຂອງຊາວກະສິກອນຜູ້ເຂົ້າຮ່ວມແລະບໍ່ເຂົ້າຮ່ວມໂຄງການ ໃນປີ 2004/2005. ຢູ່ບ້ານຫາດຮວາຍ, ປິ່ງດົງ, ສາມຕົ້ນ ແລະ ນາມອນ ຜູ້ເຂົ້າຮ່ວມມີລາຍຮັບເພີ່ມຂຶ້ນໜ້ອຍໜຶ່ງ. ກົງກັນຂ້າມ, ຜູ້ທີ່ບໍ່ໄດ້ເຂົ້າຮ່ວມໃນທັງ 4 ບ້ານ ພັດມີລາຍຮັບຫຼຸດ ແຕ່ໜ້ອຍເຖິງຫຼາຍ. ສຳລັບຢູ່ບ້ານປິ່ງດົງ ທັງຜູ້ເຂົ້າຮ່ວມແລະບໍ່ເຂົ້າຮ່ວມມີລາຍຮັບຫຼຸດລົງຫຼາຍ. ຈາກການສຳພາດສອບຖາມ ເຫດຜົນຫຼັກ ແມ່ນ ໄພແຫ້ງແລ້ງໃນເດືອນ 7-8 ປີ 2005 ເຮັດໃຫ້ຜົນຜະລິດກະສິກຳຫຼຸດລົງຫຼາຍ.



ຮູບ3. ລາຍຮັບຕໍ່ຄອບຄົວຂອງຊາວບ້ານຫາດຮວາຍແລະບ້ານສາມຕົ້ນ




ຮູບ4. ລາຍຮັບຕໍ່ຄອບຄົວຂອງຊາວບ້ານປົ່ງດົ່ງແລະບ້ານນາມອນ




**3.2 ການປຽບທຽບລາຍຮັບ (ສູງ ຫຼື ຕ່ຳ) ຂອງຊາວກະສິກອນຜູ້ເຂົ້າຮ່ວມ ແລະ ບໍ່ເຂົ້າ ໂຄງການ**

ການຜະລິດທົດແທນການເຮັດໄຮ່ ທີ່ເປັນຮູບປະທຳທີ່ ໂຄງການ ສົ່ງເສີມ ຍັງບໍ່ທັນໄດ້ເລີ້ມ ໃນປີ 2004, ລາຍຮັບສະເລ່ຍຕໍ່ປີຂອງຜູ້ບໍ່ທັນເຂົ້າ ຢູ່ ທັງ 4 ບ້ານຈຸດເລີ້ມຕົ້ນ ຕ່ຳກວ່າລາຍຮັບຂອງຜູ້ທີ່ເຂົ້າຮ່ວມໂຄງການ. ສາຍເຫດອັນໜຶ່ງ ແມ່ນວ່າ ຊາວກະສິກອນຜູ້ບໍ່ທັນເຂົ້າຮ່ວມໂຄງການ ເປັນຜູ້ຢູ່ໃນຊັ້ນຄົນທຸກຈົນ ເປັນສ່ວນຫຼາຍ, ຢູ່ໃນບ້ານກໍ່ບໍ່ມີກຳລັງແຮງໃນການອອກສຽງ, ບໍ່ຄ່ອຍມີຄວາມຫ້າວຫັນຢາກເຂົ້າຮ່ວມແລະອື່ນໆ. ອາດເວົ້າວ່າ ດ້ວຍເຫດນີ້ ຈຶ່ງເຮັດໃຫ້ເຂົາເຈົ້າບໍ່ສາມາດເຂົ້າຮ່ວມໂຄງການໄດ້. ແຕ່ນີ້ຕໍ່ໄປ ຈະຕ້ອງຂີນຂວາຍ ເອົາຜູ້ທີ່ຍັງບໍ່ທັນໄດ້ເຂົ້າຮ່ວມການເຄື່ອນໄຫວ ມາຮ່ວມຈັດຕັ້ງປະຕິບັດກິດຈະກຳ ໂດຍຜ່ານລະບົບຫມູນວຽນພາຍໃນບ້ານ.

**4. ແນວໂນ້ມຂອງເນື້ອທີ່ໄຮ່ຢູ່ທັງ 4 ໝູ່ບ້ານຈຸດເລີ້ມຕົ້ນ**

ເນື້ອທີ່ໄຮ່ລວມໝົດບ້ານ ແລະຂອງແຕ່ລະຄອບຄົວ ລ້ວນແຕ່ຫຼຸດລົງ (ຮູບ 5,6). ສາຍເຫດຕົ້ນຕໍ ມີ 3 ສາຍເຫດດັ່ງລຸ່ມນີ້.

① ການຂະຫຍາຍຂອງເນື້ອທີ່ນາ

ຍ້ອນການຂະຫຍາຍເນື້ອທີ່ນາ ໂດຍ ໂຄງການ ຟໍຄອມ ສົ່ງເສີມຊ່ວຍເຫຼືອ ຢູ່ບ້ານຫາດຮວາຍ, ບ້ານປົ່ງດົ່ງ ແລະ ບ້ານນາມອນ ຜົນຜະລິດເຂົ້າຈາກນາໄດ້ເພີ່ມຂຶ້ນ, ເນື້ອທີ່ໄຮ່ປູກເຂົ້າກໍ່ຫຼຸດລົງ.

② ການຂະຫຍາຍເນື້ອທີ່ປູກພືດອາຫານສັດ

ຍ້ອນຜົນການລ້ຽງສັດແລະຈຳນວນສັດເພີ່ມຂຶ້ນເນື່ອງຈາກມີ ການຊ່ວຍເຫຼືອຈາກໂຄງການ ເຮັດໃຫ້ຄວາມຕ້ອງການພືດອາຫານສັດເພີ່ມຂຶ້ນ, ປ່ຽນແທນການເຮັດໄຮ່ຫັນມາປູກພືດອາຫານສັດຫຼາຍຂຶ້ນ.

③ ການເພີ່ມຂຶ້ນຂອງເນື້ອທີ່ປູກພືດເປັນສິນຄ້າ(ປ່ຽນເປັນເງິນ)

ຫ່ວາງມໍ່ໆມານີ້, ຍ້ອນລັດຖະບານລາວ ໄດ້ດຳເນີນນະໂຍບາຍສົ່ງເສີມການປູກພືດເປັນສິນຄ້າ (ສາລີ, ໝາກເດືອຍ, ງາ, ຢາງພາລາ ແລະອື່ນໆ)ແທນໄຮ່ເຂົ້າ ເຮັດໃຫ້ເນື້ອທີ່ໄຮ່ຫລຸດລົງ.

ຮູບ5. ເນື້ອທີ່ໄຮ່ເຂົ້າ (ເຮັກຕາ)




ຮູບ 6 ເນື້ອທີ່ໄຮ່ເຂົ້າ ຕໍ່ ຄອບຄົວ (ເຮັກຕາ)




**ມ້ວນທ້າຍ**

ເລີ້ມໃຫ້ການສົ່ງເສີມຊ່ວຍເຫຼືອກິດຈະກຳການຜະລິດ ທົດແທນການເຮັດໄຮ່ປູກເຂົ້າ ໃນເດືອນ 5 ປີ 2005. ໃນການເຄື່ອນໄຫວສົ່ງເສີມຊ່ວຍເຫຼືອ, ກິດຈະກຳທີ່ສ້າງລາຍໄດ້ຢ່າງໄວ ແລະ ແນ່ນອນ ແມ່ນການລ້ຽງສັດ, ໂດຍສະເພາະແມ່ນການລ້ຽງໝູ. ຈາກການສຳຫຼວດຄັ້ງທີ 2 ໃນເດືອນ 12 ປີ 2005 ນັ້ນບໍ່ອາດເວົ້າໄດ້ຈະແຈ້ງກ່ຽວກັບຜົນຮັບ, ດັ່ງນັ້ນ, ຈຶ່ງມຸ້ງຫວັງໃສ່ຜົນສຳຫຼວດຄັ້ງທີ 3 ໃນເດືອນ 2 ປີ 2006.

(ຫມາຍເຫດ) ຂໍ້ມູນອ້າງອີງ 1: ການສຳຫຼວດເສດຖະກິດຄອບຄົວ ໂດຍໂຄງການ ຟໍຄອມ (FORCOM) ຄັ້ງທີ 1.
ຂໍ້ມູນອ້າງອີງ 2: ການສຳຫຼວດເສດຖະກິດຄອບຄົວ ໂດຍໂຄງການ ຟໍຄອມ (FORCOM) ຄັ້ງທີ 2

# ລາຍງານຄາບເຂົ້າທ່ຽງມື້ນີ້

*ຢູ່ຍີ່ປຸ່ນອາຫານລາວບໍ່ຄ່ອຍມີຊື່ສຽງປານໃດ. ແຕ່ວ່າ "ອາຫານລາວ" ກໍ່ມີຫຼາຍອັນແຊບ! ຂໍເອົາອາຫານລາວ ທີ່ໄດ້ພົບເຫັນຕາມພື້ນທີ່ການເຄື່ອນໄຫວ ຂອງໂຄງການ ມາເລົ່າສູ່ຟັງ. ຜູ້ລາຍງານເທື່ອນີ້ ແມ່ນ ຊຽວຊານ ນາງ ອີຊີບາຊິ.*

ຄາບເຂົ້າທ່ຽງມື້ນັ້ນ ແມ່ນ ຢູ່ບ້ານໂພນທອນ, ເມືອງເຟືອງ, ແຂວງວຽງຈັນ. ເມື່ອຝຶກອົບຮົມກ່ຽວກັບການລ້ຽງໄກ່ ໃຫ້ຊາວບ້ານ ຜ່ານໄປໄດ້ເຄິ່ງໜຶ່ງ (ຕອນເຊົ້າ) ຊາວບ້ານກໍ່ໄດ້ແຕ່ງເຂົ້າທ່ຽງລ້ຽງພວກເຮົາ. ລາຍການອາຫານຄາບນີ້ ມີ ລາບງົວ (ຮູບຂວາເທິງ) ຂົ້ວຊີ້ນ, ແກງ, ຫມາກແຕງທີ່ເກັບມາຈາກສວນໃໝ່ໆ, ແຈ່ວໝາກເຜັດ ຜົງ (ຮູບຂວາລຸ່ມ) ແລະ ເຂົ້າໜຽວ.




ແກງຊີ້ນງົວ ມີຊີ້ນງົວຂົ້ວໃສ່ຜັກທຽມ ແລະ ຫອມບົ່ວ. ແຈ່ວມັກມີຢູ່ເລື້ອຍໆ ຈະບໍ່ຂໍອະທິບາຍ, ມັນເຜັດໜ້ອຍໜຶ່ງ ລົດຊາດເຂົ້າກັນດີກັບຂົ້ວຊີ້ນ ແລະ ເຂົ້າໜຽວແທ້ໆ. ມື້ນີ້ ມີພະນັກງານສົ່ງເສີມກະສິກຳ ແລະ ປ່າໄມ້ ແຂວງ ແລະ ເມືອງ ພ້ອມດ້ວຍພະນັກງານໂຄງການ, ນາຍບ້ານ, ສະມາຊິກຜູ້ເຂົ້າຮ່ວມຝຶກ





ອົບຮົມ ແລະ ເອື້ອຍລ້ຽງ ເຂົ້າຮ່ວມພາເຂົ້ານຳກັນ.

## ເລົ່າເລື່ອງເຄື່ອງປ່າຂອງດົງ(NTFP) ຢູ່ລາວ ໂດຍທ່ານ ວາຕານາເບະ ໂມຣິອາກິ

**NTFP ແມ່ນຫຍໍ້ມາຈາກຄຳວ່າ** Non Timber Forest Products **ທີ່ມີຄວາມໝາຍວ່າ:** ຜົນຜະລິດທີ່ໄດ້ມາຈາກປ່າ ທີ່ບໍ່ແມ່ນໄມ້ທ່ອນ.

### ຫວາຍ(ພາສາອັງກິດ:Rattan)

ເທື່ອນີ້ ຢາກຈະແນະນຳເລື່ອງ ຫວາຍ ທີ່ຄົນຍີປຸ່ນ ຮູ້ຈັກກັນດີ. ຢູ່ຍີປຸ່ນ ກໍ່ຖືວ່າ ເປັນວັດຖຸດິບສຳລັບເຮັດເຄື່ອງເຮືອນທີ່ມີລາຄາແພງ, ແຕ່ຢູ່ ອາຊີຕາເວັນອອກສ່ຽງໃຕ້ແລ້ວ, ມີຄຳເວົ້າວ່າ ຫວາຍໃຊ້ເຮັດສິ່ງທີ່ໄມ້ໄຜ່ເຮັດບໍ່ໄດ້ ແລະ ໃຊ້ໄມ້ໄຜ່ເຮັດສິ່ງທີ່ຫວາຍເຮັດບໍ່ໄດ້, ໝາຍຄວາມວ່າ ຫວາຍໄດ້ຖືກນຳໃຊ້ຢ່າງແຜ່ຫຼາຍ ເຂົ້າໃນຊີວິດປະຈຳວັນຂອງແຕ່ລະຄົນ, ຢູ່ລາວ ຫວາຍໃຊ້ຂ້ອງປາ, ເຮັດແຮ້ວ, ເຮັດຊາລົງ, ເຮັດຕຽງ, ອື່ນໆ. ນອກນີ້, ແຕ່ກ່ອນ ເພິ່ນຍັງໃຊ້ເຮັດກະຕໍ້ຊື່ງ ເປັນກິລາ ທີ່ໄດ້ຮັບຄວາມນິຍົມຫລາຍ ຢູ່ ໃນໝູ່ຄົນລາວ.



ຫວາຍ ຢູ່ ໃນຕະກູນຕົ້ນພ້າວ ເຊິ່ງຢູ່ໃນໂລກນີ້ ມີຫຼາຍກວ່າ 500 ຊະນິດ. ໃນນັ້ນ 57 ຊະນິດ ແມ່ນ ພົບເຫັນໄດ້ຢູ່ໃນລາວ.ເວົ້າກັນວ່າ ຫວາຍຊະນິດເສັ້ນນ້ອຍ ມີເສັ້ນຜ່າສູນກາງ 3 ມິນລີແມັດ, ຊະນິດເສັ້ນໃຫ່ຍມີເສັ້ນຜ່າສູນກາງ 20 ຊັງຕີແມັດ ແລະ ຍາວສຸດ 300 ແມັດ.

ສິ່ງທີ່ແປກ ກໍ່ຄື ຄົນລາວເອົາຫວາຍມາກິນ ! ຢູ່ທາງພາກເໜືອ ສາມາດພົບເຫັນຫວາຍໄດ້ງ່າຍ ເພາະວ່າມັນມີຂາຍຕາມຕະຫຼາດທົ່ວໄປ. ອັນນີ້ ແມ່ນຍອດຫວາຍ (ຮູບຊ້າຍ). ໃນການ ປຸງແຕ່ງຍອດຫວາຍເປັນອາຫານນັ້ນ ເພິ່ນຈະເອົາໄປເຜົາທັງກາບແກ່ ແລ້ວຈື່ງປອກເປືອກເອົາໜາມແລະກາບແກ່ ທີ່ໄຟໄຫມ້ອອກແລ້ວ ຈະເຫຼືອແຕ່ຍອດອ່ອນທາງໃນຂອງມັນ. ຈາກນັ້ນ ກໍ່ເອົາໄປລ້າງນ້ຳ ແລ້ວເອົາມາຕຳໃສ່ເຄື່ອງເທດ, ຫຼັງຈາກນັ້ນກໍ່ພ້ອມເສີບ ເປັນອາຫານໄດ້ (ຮູບຂວາ). ນອກຈາກນີ້ ຍອດຫວາຍ ຍັງເອົາມາໃສ່ເອາະຫຼາມ ທີ່ເປັນອາຫານຂຶ້ນຊື່ຂອງແຂວງຫຼວງພະບາງ. ຍອດຫວາຍ ມີສີຂາວເຫຼືອງ ມີລົດຊາດ ທີ່ ຄົນຍີປຸ່ນ ເຮົາກິນໃດ້ງ່າຍ ຖ້າທ່ານໄດ້ໄປຢ້ຽມຢາມລາວ ກໍ່ລອງຊີມແຈ່ວຍອດຫວາຍ ຫຼື ແກງຍອດຫວາຍເບິ່ງ, ມັນຄົງຈະເປັນປະສົບການ ທີ່ລືມບໍ່ລົງໄດ້ງ່າຍໆ.



## ເລື່ອງຕ່າງໆຂອງລາວ

*~ມູມນີ້ຈະໄດ້ນຳສະເໜີໂສມໜ້າຂອງລາວ*
*ຜູ້ລາຍງານເທື່ອນີ້ ແມ່ນ ທ່ານ ມິໂຍະຊິ*

### ກິລາທີ່ແຜ່ຫຼາຍ ? ໝາກບູນ (ເປຕ໋ອງ)

ໃນໄລຍະບໍ່ດົນຜ່ານມານີ້ ເມື່ອເຮົາຍ່າງໃນຕົວເມືອງ ຈະພົບເຫັນກິລາຊະນິດໜຶ່ງ ຄື ໝາກບູນ(ເປຕ໋ອງ). ກິລາຊະນິດນີ້ ສາມາດຫຼີ້ນໄດ້ໃນບ່ອນແຄບໆ, ເຄື່ອງມືກໍ່ມີແຕ່ ໜ່ວຍບານເຫຼັກ(ຫມາກບູນ) 12 ໜ່ວຍ ແລະ ໜ່ວຍນ້ອຍ(ຫມກບີ) 1 ໜ່ວຍ. ເວົ້າໄດ້ວ່າ ເປັນກິລາທີ່ສາມາດຫຼິ້ນໄດ້ງ່າຍ, ແລະ ເປັນກິລາທີ່ຄົນລາວມັກນິຍົມຫຼິ້ນ ຊະນິດໜຶ່ງອີກດ້ວຍ.

ຢູ່ໜ້າຫ້ອງການຂອງ ໂຄງການ ຟໍຄອມ ກໍ່ມີເດີ່ນຫລິ້ນໝາກບູນຄືກັນ, ໃນຕອງແລງ ຈະມີຜູ້ຄົນ, ໂດຍສະເພາະ ແມ່ນ ພະນັກງານ ກະສິກຳແລະປ່າໄມ້ ມັກມາເຕົ້າໂຮມກັນຢູ່ຫັ້ນ. ເມື່ອຄົບຄົນແລ້ວກໍ່ພາກັນຫຼີ້ນຢ່າງມ່ວນຊື່ນແລະງ່າຍດາຍ ຈຶ່ງເຮັດໃຫ້ມັນແຜ່ຫຼາຍໃນໝູ່ຄົນລາວ.

ໃນການແຂ່ງຂັນກິລາຊີເກມ ໃນຄັ້ງກ່ອນ,ສປປລາວ ກໍ່ໄດ້ຮັບຫຼຽນຄຳ ໃນການແຂ່ງຂັນກິລາ ໝາກບູນ.

ຂ້າພະເຈົ້າຄິດວ່າ ຕໍ່ຈາກນີ້ໄປ ກິລາແຂ່ງຂັນຫລິ້ນໝາກບູນ ຍິ່ງຈະໄດ້ຮັບຄວາມນິຍົມເພີ່ມຫຼາຍຂຶ້ນກວ່າເກົ່າຢ່າງແນ່ນອນ.

ວິທີຫຼິ້ນ ກໍ່ມີຄືດັ່ງນີ້ :

①ແບ່ງອອກເປັນ 2 ທີມ (ແຕ່ລະທີມອາດຈະມີ 1 ຄົນ, 2 ຄົນ ຫຼື ທີມລະ 3 ຄົນ).


ການຫຼິ້ນໝາກບູນ

② ແຕ່ລະຄົນ ມີສິດຖືຫມາກບູນໄວ້ໄດ້ 3 ໜ່ວຍ (ກໍລະນີ ຫຼິ້ນເປັນທີມ ແມ່ນຖືໄວ້ 2 ໜ່ວຍ) ③ ໂຍນຫມາກບີ່ອອກໄປ ④ ຈາກນັ້ນ ທີມ A ໂຍນກ່ອນໜຶ່ງໜ່ວຍ, ຕໍ່ໄປ ທີມ B ກໍ່ໂຍນ (ກໍລະນີທີ່ ທີມ B ໂຍນໝາກບູນໄປແລະຕົກໄປໄກ້ໝາກບີ່ ຫຼາຍກວ່າໜ່ວຍຂອງທີມ A ແມ່ນປ່ຽນໃຫ້ທີມ A ໄດ້ໄປໂຍນ ⑤ ຖ້າທີມໃດຫາກສາມາດ ໂຍນຫມາກບູນ ຂອງຕົນເອງເຂົ້າໄປໄກ້ຫມາກບີ່ ຫຼາຍທີ່ສຸດ ແມ່ນຈະໄດ້ 1 ຄະແນນ ຕໍ່ຫມາກບູນ 1 ໜ່ວຍ. ການແຂ່ງຂັນແມ່ນ 13 ເກມ, ທີມໃດໄດ້ຄະແນນຫຼາຍເປັນຜູ້ຊະນະ. ຂໍພຽງແຕ່ມີ ໝາກບານເຫຼັກ (ຫມາກບູນ) ແມ່ນເກືອບວ່າຢາກຫຼິ້ນຢູ່ໃສ ກໍ່ໄດ້.


ໝາກບູນທີ່ໃຊ້ຫລິ້ນ

### ກິດຈະກຳຕົ້ນຕໍ

**· ຜູ້ຢ້ຽມຢາມ (ແຕ່ວັນທີ 1 ເຖິງ 31 ເດືອນ 3)**

ວັນທີ 8 ເດືອນ 3: ທ່ານ ຟູຣູຢະ (ສະຖາບັນຄົ້ນຄ້ວາດ້ານປ່າໄມ້ ຍີ່ປຸ່ນ) ມາຢ້ຽມຢາມຫ້ອງການໂຄງການ ທີ່ ວຽງຈັນ ເພື່ອປຶກສາຫາລືກ່ຽວກັບ ການສຳຫລວດປ່າໄມ້ຮ່ວມກັນ.

ວັນທີ 21ເດືອນ 3: ລາຍການໂຄສະນາ ODA (ນຳໂດຍ ທ່ານ ເຊກິກຸຈິ ໂຕໂມຣິໂຣະ)ມາສຳພາດແລະຖ່າຍທຳການເຄື່ອນໄຫວຂອງໂຄງການ ຟໍຄອມ.

**· ກິດຈະກຳຕົ້ນຕໍ (ແຕ່ວັນທີ 1 ເຖິງ 31 ເດືອນ 3)**

ວັນທີ 3 ເດືອນ 3: ຈັດກອງປະຊຸມໝົດບ້ານຄັ້ງທີ່ 1 ຢູ່ ບ້ານຫ້ວຍຫລາ (ມ. ນານ, ຂ. ຫຼວງພະບາ)

ວັນທີ 15 ເດືອນ 3: ຈັດກອງປະຊຸມໝົດບ້ານຄັ້ງທີ່ 1 ຢູ່ ບ້ານປາກທາດ (ມ. ຜາອຸດົມ, ຂ. ບໍ່ແກ້ວ)

ວັນທີ 23 ເດືອນ 3: ຈັດທັດສະນະສຶກສາກ່ຽວກັບການລ້ຽງໝູໃຫ້ແກ່ຊາວກະສິກອນບ້ານສາມຕົ້ນແລະບ້ານວັງເຫິງ

ວັນທີ 27ເດືອນ 3: ຈັດຊຸດຝຶກອົບຮົມ ການຄຸ້ມຄອງແລະການຕິດຕາມກວດກາສັດລ້ຽງ (ວັນທີ 27 ເຖິງ 29)

### ຂໍ້ຄວາມຈາກບັນນາທິການ

ໃນໄລຍະປີໃໝ່ລາວ ໃກ້ເຂົ້າມາ, ເຮັດໃຫ້ວຽກງານບໍ່ເປັນໄປຕາມແຜນ, ການຈັດທີມວາລະສານ(ຈົດຫມາຍຂ່າວ) ກໍ່ຊັກຊ້າ. ຂໍອະໄພນຳທຸກທ່ານຫຼາຍໆ. ລະດູຝົນກໍ່ໃກ້ເຂົ້າມາ, ປີນີ້ ຮູ້ສຶກວ່າ ຝົນຈະຕົກແຮງກວ່າປີກາຍ. ຢູ່ຕາມຖະໜົນຫົນທາງກໍ່ມີຄົນກັ້ງຄັນຮົ່ມ, ລົມໂທລະສັບ ທັງຂັບລົດຈັກ ແລະ ມັກເກີດອຸປະຕິເຫດເລື້ອຍໆ.. ທຸກໆທ່ານ ລະວັງແດ່ເດີ້...

ຊື່ລາວ : ແອ

**ເວບໄຊຂອງ Forcom ແມ່ນ http://www.forcom-laos.sakura.ne.jp/**
**ພວກເຮົາລໍຖ້າຄຳຄິດຄຳເຫັນຂອງທ່ານກ່ຽວກັບໂຄງການຫຼືຈົດໝາຍຂ່າວນີ້ຢູ່.**